ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມໃຫຍ່
# ກຳມະບານຮາກຖານ ສທຄ ຄັ້ງທີ III




ກອງປະຊຸມໃຫຍ່ສະມາຊິກກຳມະບານ ຂອງກຳມະບານຮາກຖານ ສະຖາບັນການທະນາຄານ (ສທຄ) ຄັ້ງທີ III ໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນບ່າຍຂອງວັນທີ 11 ທັນວາ 2019 ທີ່ ສະໂມສອນ ສທຄ. ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງິາ, ຄະນະພັກ ທະນາຄານແຫ່ງ ສປປ ລາວ (ທຫລ), ປະທານສະຫະພັນກຳມະບານ ທຫລ ພ້ອມດ້ວຍ ສະຫາຍ ປອ. ສັນຕິ ພົນເມືອງລາວ ເລຂາຄະນະພັກຮາກຖານ ສທຄ, ສະຫາຍ ສົມມີໄຊ ເຕໂຊ ຮອງປະທານກຳມະບານຮາກຖານ ສທຄ, ສະມາຊິກກຳມະບານຮາກຖານ ສທຄ ແລະ ແຂກທີ່ຖືກເຊີນ 200 ກວ່າສະຫາຍ.

ກອງປະຊຸມຍັງໄດ້ຜ່ານບົດລາຍງານການເມືອງຂອງຄະນະກຳມະບານຮາກຖານ ສທຄ ແຕ່ປີ 2014-2018, ທີ່ສ່ອງແສງໃຫ້ເຫັນໝາກຜົນຂອງການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະບານຮາກຖານ ສທຄ ໂດຍໄດ້ເອົາໃຈໃສ່ອົບຮົມແນວຄິດການເມືອງ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກດ້ວຍຫຼາຍຮູບແບບ, ມີສະຕິເຄົາລົບຕໍ່ກົດລະບຽບ-ກົດໝາຍຂອງພັກ-ລັດ, ມີແນວຄິດການເມືອງ ແລະ ທັດສະນະຊົນຊັ້ນກຳມະກອນໜັກແໜ້ນ, ມີທັດສະນະມະຫາຊົນສາມາດຮັກສາຄວາມສາມັກຄີພາຍໃນໄດ້ເປັນຢ່າງດີ, ມີຄວາມຫ້າວຫັນຕໍ່ການປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ສຳເລັດຕາມການມອບໝາຍ; ໃນດ້ານກົງຈັກ-ການຈັດຕັ້ງ ແລະ ກໍ່ສ້າງສະມາຊິກກຳມະບານ ໄດ້ມີການປັບປຸງໂຄງຮ່າງການຈັດຕັ້ງຄືນໃໝ່ ໂດຍໄດ້ແບ່ງເປັນໜ່ວຍເພື່ອເຄື່ອນໄຫວ ແລະ ແຕ່ງຕັ້ງບຸກຄະລາກອນເພື່ອຈັດແບ່ງວຽກຢ່າງລະອຽດໃນແຕ່ລະໜ່ວຍໃຫ້ແທດເໝາະກັບຄວາມເປັນຈິງ ໂດຍຈຳນວນສະມາຊິກກຳມະບານຮາກຖານ ສທຄ ເຖິງປີ 2017 ມີ 117 ສະຫາຍ, ຍິງ 62 ສະຫາຍ ແລະ ມີແຜນຮັບເອົາມະຫາຊົນກ້າວໜ້າເຂົ້າເປັນສະມາຊິກເພີ່ມອີກ 20 ຄົນ; ດ້ານວຽກງານວິຊາສະເພາະ: ສະມາຊິກກຳມະບານທີ່ເປັນຄູອາຈານສິດສອນໄດ້ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ເປັນຄູທີ່ສອນດີ-ສອນເກັ່ງ ເຊິ່ງໄດ້ສະແດງອອກໃຫ້ເຫັນເຖິງຜົນງານໃນໄລຍະຜ່ານມາຄື: ໃນສົກສຶກສາ 2014-2015 ມີຄູສອນດີສອນເກັ່ງ 10 ສະຫາຍ (ຍິງ 4 ສະຫາຍ), ຄູສອນດີ ຈຳນວນ 35 ສະຫາຍ (ຍິງ 14 ສະຫາຍ), ໃນສົກສຶກສາ 2016-2017 ມີຄູສອນດີເດັ່ນ 2 ສະຫາຍ (ຍິງ 4 ສະຫາຍ), ຄູສອນດີ ຈຳນວນ 44 ສະຫາຍ (ຍິງ 19 ສະຫາຍ); ວຽກງານຄົ້ນຄວ້າວິໄຈ ໃນສົກສຶກສາ 2014-2015 ສາມາດສຳເລັດບົດວິໄຈ ແລະ ບົດຄົ້ນຄວ້າ 3 ຫົວຂໍ້, ສົກສຶກສາ 2015-2016 ສຳເລັດ 6 ຫົວຂໍ້, ນຳພານັກສຶກສາໃນການຂຽນບົດຈົບຊັ້ນປະລິນຍາຕີອີກຫຼາຍຮ້ອຍບົດ

ແລະ ນອກຈາກນີ້, ຍັງໄດ້ສຳເລັດການສ້າງ ແລະ ກວດແກ້ຄູ່ມືຕຳລາສິດສອນ ຈຳນວນ 36 ວິຊາ, ກຳລັງຢູ່ໃນຂັ້ນຕອນກວດແກ້ 28 ວິຊາ; ດ້ານວຽກງານສົ່ງເສີມວຽກເຮັດງານທຳ ດ້ວຍການຮ່ວມມືກັບບັນດາບໍລິສັດ, ທະນາຄານທຸລະກິດ ແລະ ສະຖາບັນການສຶກສາ ຈັດເວທີການຈັດຫາງານ, ການຝຶກງານ, ຮ່ວມມືກັບບໍລິສັດກວດສອບ PricewaterhouseCoopers ແລະ ບໍລິສັດກວດສອບ Ernst & Young ລາວ ຈັດການສອບເສັງເອົານັກສຶກສາປີສຸດທ້າຍເຂົ້າເຮັດວຽກ ປີລະ 2 ຄັ້ງ, ຮ່ວມມືກັບບັນດາສະຖາບັນການສຶກສາ ແລະ ການຈັດຕັ້ງຕ່າງໆ ໃນການຈັດຕະຫຼາດແຮງງານປີລະ 2 ຄັ້ງ, ເຂົ້າຮ່ວມງານພົບປະຜູ້ປະກອບການທີ່ມະຫາວິທະຍາໄລແຫ່ງຊາດປີລະ 2 ຄັ້ງ, ໃຫ້ທຶນຝຶກອົບຮົມພາສາຫວຽດນາມໃຫ້ສະມາຊິກກຳມະບານຈຳນວນ 12 ສະຫາຍທີ່ສະຖາບັນກຳມະບານລາວ. ນອກຈາກນີ້, ໃນດ້ານຂະບວນການໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມໃນດ້ານຕ່າງໆ ເຊັ່ນການບໍລິຈາກເລືອດ ແລະ ການມອບອຸປະກອນການສຶກສາ-ລົມທົບທຶນສ້າງໂຮງຮຽນຕ່າງໆ ລວມທັງໝົດຕັ້ງແຕ່ປີ 2014 ເປັນຕົ້ນມາເປັນມູນຄ່າ 248,940,000 ກີບ.

ດ້ານວຽກງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ໂດຍໄດ້ຈັດຕັ້ງການປະເມີນຕີລາຄາສະມາຊິກກຳມະບານໃນສົກປີ 2014-2015 ມີສະມາຊິກກຳມະບານດີເດັ່ນ 65 ສະຫາຍ, ດີ 2 ສະຫາຍ, ປີ 2017 ປະເມີນສະມາຊິກກຳມະບານ 5 ເປັນເຈົ້າໄດ້ 74 ສະຫາຍ ຈາກສະມາຊິກທີ່ຄົບເງື່ອນໄຂທັງໝົດ 105 ສະຫາຍ ແລະ ຜົນງານດ້ານອື່ນໆອີກຈຳນວນໜຶ່ງ.

ໃນກອງປະຊຸມຍັງໄດ້ຮັບຟັງການຜ່ານບົດສຳຫຼວດການນຳພາຂອງຄະນະບໍລິຫານງານກຳມະບານຮາກຖານ ສທຄ ຊຸດເກົ່າ ແລະ ປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານກຳມະບານຮາກຖານ ສທຄ ຊຸດໃໝ່ ຊຶ່ງປະກອບມີ 7 ສະຫາຍ ແລະ ໄດ້ເລືອກເອົາສະຫາຍ ວິໄລຄຳ ປ້ອງພິມຄຳ ເປັນປະທານສະຫະພັນກຳມະບານຮາກຖານ ສທຄ, ສະຫາຍ ປອ. ບຸນຍືນ ໄຊເກຍາຈົ່ງຕົວ ເປັນຮອງປະທານ ແລະ ສະຫາຍ ຖະໜອມສັກ ຈັນທະລາສີ ເປັນຮອງປະທານ ແລະ ປະທານກວດກາ.

ໃນຕອນທ້າຍຂອງກອງປະຊຸມ, ສະຫາຍປະທານສະຫະພັນກຳມະບານ ທຫລ ໄດ້ໃຫ້ກຽດໂອ້ລົມແກ່ສະມາຊິກສະຫະພັນກຳມະບານຮາກຖານ ສທຄ, ໂດຍສະຫາຍໄດ້ຕີລາຄາສູງຕໍ່ຜົນງານໃນດ້ານຕ່າງໆທີ່ສະຫະພັນກຳມະບານຮາກຖານ ສທຄ ສາມາດຍາດໄດ້ຜ່ານມາ ແລະ ພ້ອມທັງຮຽກຮ້ອງໃຫ້ຄະນະບໍລິຫານງານກຳມະບານຮາກຖານ ສທຄ ຊຸດໃໝ່ ແລະ ສະມາຊິກກຳມະບານທຸກສະຫາຍຈົ່ງໄດ້ເອົາໃຈໃສ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກຂອງລັດຢ່າງໜັກແໜ້ນ ແລະ ເປັນເອກະພາບສູງໃນການຈັດຕັ້ງປະຕິບັດທຸກມະຕິຄຳສັ່ງຂອງຂັ້ນເທິງ ເພື່ອໃຫ້ເກີດຜົນສຳເລັດສູງສຸດ, ເອົາໃຈໃສ່ສຶກສາອົບຮົມແນວຄິດການເມືອງ ໃຫ້ມີຄຸນທາດການເມືອງໜັກແໜ້ນ,ເຊີດຊູຍົກສູງໄດ້ຄຸນລັກສະນະດີເລີດຂອງຊົນຊັ້ນກຳມະກອນ ເພື່ອນຳມາຜັນຂະຫຍາຍໃນການປະຕິບັດໜ້າທີ່ການເມືອງຂອງຕົນ.





#ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.

ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ